# ຄຳຖາມ ຄຳຕອບ ກ່ຽວກັບການຈົດທະບຽນແຮງງານຂ້າມຊາດຈາກພະມ້າ ລາວ ກຳພູຊາ ຕາມມະຕິຂອງລັດຖະມົນຕີ ໑໐ ພຶດສະພາ ພສ ໒໕໔໗

໑. ເມື່ອປີຜ່ານມາຄົນທີ່ບໍ່ເຄີຍເຮັດບັດທີ່ອຳເພີ ສຳນັກງານ ຫລື ເທດສະບານ (ທລ ໒໕໔໗) ສາມາດເຮັດບັດແຮງງານໃນປີນີ້ໄດ້ບໍ່

ຕອບ: ບໍ່ໄດ້

## ໒. ຜູ້ໃດ ທີ່ສາມາດຕໍ່ ຫລື ເຮັດບັດແຮງງານໄດ້ໃນປີນີ້

ຕອບ;

໒.໑ ແມ່ນຄົນທີ່ມີບັດທີ່ໄດ້ເຮັດນຳ ອຳເພີ/ເທດສະບານ ທລ ໓໗/໑ ໃນເດືອນ ກໍລະກົດ ປີຜ່ານມາແລະ ຍັງບໍ່ມີບັດແຮງງານ.

- ຕ້ອງໄປຫານາຍຈ້າງທີ່ມີໂຄຕາ ພາຍໃນ ວັນທີ່ ໓໐ ມີນາ ໒໕໔໗
- ແຮງງານຈະຕ້ອງໄປກວດສຸກຂະພາບ ແລະ ຊື້ປະກັນສຸກຂະພາບທີ່ໂຮງພະຍາບານ
- ໃຫ້ແຮງງານ ແລະ ນາຍຈ້າງໄປເຮັດບັດແຮງງານ ທີ່ຈັງຫວັດພາຍໃນວັນທີ່ ໓໐ ມີນາ ໒໕໔໗

໒.໒ ຄົນທີ່ເຄີຍເຮັດບັດ ນຳອຳເພີ ຫລືເທດສະບານ ທລ ໓໗/໑ ແລະມີບັດແຮງງານເກົ່າປີຜ່ານມາ ແລະຍັງເຮັດວຽກກັບນາຍຈ້າງເກົ່າຢູ່ນັ້ນ.

- ແຮງງານຈະຕ້ອງໄປກວດສຸກຂະພາບ ແລະ ຊື້ປະກັນສຸກຂະພາບທີ່ໂຮງພະຍາບານ
- ໄປຍື່ນຂໍຕໍ່ບັດອະນຸຍາດທຳງານ ທີ່ຈັດຫາງານຈັງຫວັດພາຍໃນ ວັນທີ່ ໓໐ ມີນາ ໒໕໔໗

໒.໓ ຄົນທີ່ເຄີຍເຮັດບັດ ທີ່ອຳເພີ ທີ່ເທດສະບານ ທລ ໓໗/໑ ແລະມີບັດແຮງງານເກົ່າປີຜ່ານມາ ແຕ່ ອອກຈາກນາຍຈ້າງເກົ່າ ແລະ ຈ້ອງການຍ້າຍນາຍຈ້າງ.

ນາຍຈ້າງເກົ່າຕ້ອງແຈ້ງອອກກ່ອນພາຍໃນ ໑໕ ວັນ ທີ່ແຮງງານລາອອກ.

- ແຮງງານຈຕ້ອງຫານາຍຂ້າງໃໝ່ທີ່ມີໂຄຕາໃຫ້ໄດ້ພາຍໃນວັນທີ່ ໓໐ ມີນາ ໒໕໔໗
- ແຮງງານໄປກວດສູກຂະພາບແລະຊື້ປະກັນສຸກຂະພາບທີ່ໂຮງພະຍາບານ
- ແຮງງານແລະນາຍຈ້າງໃໝ່ໄປຂໍຍື່ນເຮັດບັດອະນຸຍາດທຳງານທີ່ຈັດຫາງານຈັງຫວັດ ທຸກຈັງຫວັດພາຍໃນວັນທີ່ ໓໐ ມີນາ ໒໕໔໗

໒.໔ ຄົນທີ່ເຄີຍເຮັດບັດທີ່ອຳເພີ ຫລື ເທດສະບານ ທລ ໓໖/໑ແລະບໍ່ເຄີຍຂໍບັດອະນຸຍາດທຳງານ

ສຳຫລັບຄົນທີ່ເຄີຍມີ ທລ ໓໗/໑

:ເມື່ອປີຜ່ານມາແລະປີນີ້ບໍ່ຢາກຈະທຳງານຈະສາມາດຢູ່ອີກ ໑ປີ

ກໍຕໍ່ເມື່ອມີຄອບຄົວຜູ້ຕິດຕາມຂອງຄົນທີ່ຕໍ່ບັດ/ບັດທຳງານປີນີ້(ພໍ່,ແມ່,ຜົວ,ເມຍ,ລູກ)ເທົ່ານັ້ນ.

## ໓. ຢາກຈະປ່ຽນນາຍຈ້າງຕ້ອງເຮັດແນວໃດ

ຕອບ;

–ແຮງງານຕ້ອງຫານາຍຈ້າງໃໝ່ທີ່ມີໂຄຕາພາຍໃນວັນທີ່ ໓໐ ມີນາ ໒໕໕໗

–ໃຫ້ນາຍຈ້າງເກົ່າແຈ້ງອອກພາຍໃນ ໑໕ ວັນ

–ແຮງງານໄປກວດສຸກຂະພາບທີ່ໂຮງພະຍາບານແລະຊື້ປະກັນສຸກຂະພາບ.

–ແຮງງານແລະນາຍຈ້າງໄປຍື່ນຂໍເຮັດບັດແຮງງານທີ່ຈັດຫາງານຈັງຫວັດພາຍໃນ ວັນທີ່ ໓້ ມີນາ ໒໕໕໗

## ໔.ກ້າຫາກວ່ານາຍຈ້າງບໍ່ແຈ້ງອອກໃຫ້ ເຮົາຈະຕ້ອງເຮັດແນວໃດ

ຕອບ; ໃຫ້ແຮງງານພະຍາຍາມໂອ້ລົມກັບນາຍຈ້າງຂໍໃຫ້ນາຍຈ້າງແຈ້ງອອກໃຫ້

–ກ້ານາຍຈ້າງບໍ່ຍອມແຈ້ງອອກໃຫ້ແຮງງານໄປຊອກຫານາຍຈ້າງໃໝ່ທີ່ມີໂຄຕາພາຍໃນ ໓໐ ມີນາ໒໕໕໗

–ແຮງງານໄປກວດສຸກຂະພາບ ແລະ ຊື້ປະກັນສຸກຂະພາບທີ່ໂຮງພະຍາບານ

–ແຮງງານແລະນາຍຂ້າງໃໝ່ໄປເຮັດບັດແຮງງານທີ່ຈັດຫາງານຈັງຫວັດພາຍໃນ ໓໐ ມີນາ ໒໕໕໗.

## ໕. ກ້າຫາກແຮງງານບໍ່ສາມາດຊອກຫານາຍຈ້າງໃໝ່ໄດ້ພາຍໃນວັນທີ່ ໓໐ ມີນາ ໒໕໕໗ ແຮງງານຈະຕ້ອງເຮັດແນວໃດ

ຕອບ;

–ແຮງງານໄປກວດສຸກຂະພາບທີ່ໂຮງພະຍາບານແລະຊື້ປະກັນສຸກຂະພາບ.

–ແຈ້ງກັບຈັດຫາງານຈັງຫວັດວ່າຢາກຈະທຳງານ ແລະຂໍໃຫ້ເຈົ້າໜ້າທີ່ຈັດຫາງານຊ່ວຍຫານາຍຈ້າງໃໝ່ ໃຫ້ພາຍໃນ ວັນທີ່ ໓໐ ມີນາ ໒໕໕໗

## ໖. ຕ້ອງໄປເຮັດບັດທຳງານທີ່ໃດໄດ້ແດ່

ຕອບ;

– ທີ່ໂຮງອາຫານສາລາກາງ (ຈ. ຊຽງໃໝ່ )

– ຈັດຫາງານຈັງຫວັດ/ສາລາກາງທຸກໆ ຈັງຫວັກ

– ໃນກຸງເທບສາມາດໄປຕໍ່ໄດ້ທີ່ສຳນັກງານເຂດທຸກເຂດ.

໗. ແຮງານຈົດທະບຽນແລ້ວສາມາດທີ່ຈະເດີນທາງໄດ້ບໍ່

– ເດີນທາງໄປກັບນາຍຈ້າງ ແຕ່ນາຍຈ້າງຈະຕ້ອງດຳເນີນເລື່ອງທີ່ຈັດຫາງານກ່ອນ

– ເດີນທາງຂ້າມຈັງຫວັດເພື່ອໄປຮັກສາຕົນເອງ ແຕ່ຕ້ອງມີໃບນຳສົ່ງຂາກທາງໂຮງພະຍາບານກ່ອນ

– ເດີນທາງໄປເພື່ອເປັນພະຍານໃຫ້ກັບສານ ແຕ່ຕ້ອງມີໜັງສືຂາກສານກ່ອນ

ຄ່າທຳນຽມຕໍ່ບັດອະນຸຍາດທຳງານ ແລະຄ່າປະກັນສຸກຂະພາບ/ກວດສຸກຂະພາບປີ ໒໕໓໘

| ປະເພດແຣງງານ | ຄ່າທຳນຽມບັດແຣງງານ | ຄ່າທຳນຽມປະກັນສຸກຂະພາບ/ ກວດສຸກຂະພາບ | ກ້າຫາກແຣງງານຕໍ່ຫລືຂໍຈົດທະບຽນ ອະນຸຍາດທຳງານ ໑ ປີຕ້ອງຈ່າຍ |
|---|---|---|---|
| ໑.ແຣງງານທີ່ມີໃບອະນຸຍາດໃນປີ ໔໗ ແລະຈະໝົດອາຍຸໃນວັນທີ່ ໓໐ມີນາ ໔໘ ໂດຍຍັງທຳງານກັບນາຍຈ້າງເກົ່າ | –ຄ່າຍື່ນຄຳຂໍ ໑໐໐ ບາດ<br>–ຄ່າບັດແຣງງານປີ ໒໕໔໘<br>໓ ເດືອນ ໔໕໐ ບາດ<br>໖ ເດືອນ ໙໐໐ ບາດ<br>໑ ປີ ໑;໘໐໐ ບາດ<br>ລວມ ໑,໙໐໐ ບາດ | –ຄ່າກວດພະຍາດປີ໔໘ ໖໐໐ ບາດ<br>–ຄ່າປະກັນສຸກຂະພາບປີ໔໘ ໑,໓໐໐ບາດ<br>ລວມ ໑,໙໐໐ ບາດ | ໓,໘໐໐ ບາດ |
| ໒.ແຣງງານທີ່ມີໃບອະນຸຍາດທຳງານປີ໔໗ ແຕ່ໝົດອາຍຸ ໓໐ ມີນາ ໔໘ ຫລື ປ່ຽນນາຍຈ້າງ | –ຄ່າຍື່ນຄຳຂໍ ໑໐໐ ບາດ<br>–ຄ່າບັດແຣງງານຍ້ອນຫລັງ<br>໓ ເດືອນ ໔໕໐ ບາດ<br>–ຄ່າບັດແຣງງານປີ ໒໕໔໘<br>໓ ເດືອນ ໔໕໐ ບາດ<br>໖ ເດືອນ ໙໐໐ ບາດ<br>໑ ປີ ໑;໘໐໐ ບາດ<br>ລວມ ໒,໓໕໐ ບາດ | –ຄ່າກວດພະຍາດປີ໔໘ ໖໐໐ ບາດ<br>–ຄ່າປະກັນສຸກຂະພາບປີ໔໘ ໑,໓໐໐ບາດ<br>ລວມ ໑,໙໐໐ ບາດ | ໔.໒໕໐ ບາດ |

| | | | |
|---|---|---|---|
| ໓. ແຮງງານທີ່ມີ ທລ ໓໘/໑ຢ່າງດຽວ ແລະບໍ່ເຄີຍຂໍໃບອະນຸຍາດທຳງານ | –ຄ່າຍື່ນຄຳຂໍມີບັດ ໑໐໐ ບາດ<br>–ຄ່າຍື່ນຄຳຂໍຕໍ່ບັດ ໑໐໐ ບາດ<br>–ຄ່າທຳບຽນບັດແຮງງານປີ໔໗ ໔໕໐ ບາດ<br>–ຄ່າທຳບຽນບັດແຮງງານປີ໔໘<br>໓ ເດືອນ ໔໕໐ ບາດ<br>໖ ເດືອນ ໙໐໐ ບາດ<br>໑ ປີ ໑;໘໐໐ ບາດ<br>ລວມ ໒,໔໕໐ ບາດ | –ຄ່າກວດພະຍາດປະຈຳປີ໔໗ ໖໐໐ ບາດ<br>–ຄ່າປະກັນສຸກຂະພາບປີ ໔໗ ໔໐໐ ບາດ<br>–ຄ່າກວດພະຍາດປະຈຳປີ໔໘ ໖໐໐ ບາດ<br>–ຄ່າປະກັນສຸກຂະພາບປີ໔໘ ໑,໓໐໐ ບາດ<br>ລວມ; ໒,໙໐໐ ບາດ | ໕,໓໕໐ ບາດ |

## :ປິໂທຕິດຕໍ່ສຳນັກງານຈັດຫາງານຈັງຫວັດ (ສະຖານທີ່ຕໍ່ບັດ/ທຳບັດແຮງງານປີ ໒໕໔໘)

ສຳນັກງານຈັດຫາງານຈັງຫວັດ ຊຽງລາຍ ໐໕໓–໗໔໐–໖໑໑ຕໍ່ ໑໑

ສຳນັກງານຈັດຫາງານຈັງຫວັດ ຕາກ ໐໕໕–໕໔໑–໕໖໙

ສຳນັກງານຈັດຫາງານຈັງຫວັດແມ່ຮ່ອງສອນ ໐໕໓–໖໑໑–໐໘໘

ສຳນັກງານຈັດຫາງານຈັງຫວັດ ລຳປາງ ໐໕໔–໓໕໑–໑໙໙

ສຳນັກງານຈັດຫາງານຈັງຫວັດ ພູເກດ ໐໗໖–໒໑໒–໘໔໑

ສຳນັກງານຈັດຫາງານຈັງຫວັດ ສົງຂາ (ສາຂາຫາດໃຫຍ່) ໐໗໔–໒໓໔–໐໘໙, ໒໒໑–໑໑໔

ສຳນັກງານຈັດຫາງານຈັງຫວັດສະມຸດສາຄອນ ໐໓໔–໘໒໐–໗໓

ສຳນັກງານຈັດຫາງານຈັງຫວັດ ຊຽງໃໝ່ ໐໕໓–໑໒໒–໘໗໔

ສຳນັກງານຈັດຫາງານອຳເພີ ແມ່ສອດ ໐໕໕–໕໓໔–໖໓໙–໔໐ ຕໍ່ ໑໐໑–໑໐໗

ສຳນັກງານຈັດຫາງານຈັງຫວັດ ລຳພູນ ໐໕໓–໕໖໑–໐໙໐ ຕໍ່ ໕໐໑

ສຳນັກງານຈັດຫາງານຈັງຫວັດ ພັງງາ ໐໗໖–໔໑໓–໙໔໘